ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ　　　　　　　　　　　　　　　　ເລກທີ 191 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 06 ມິນາ 2025

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດອັດຕາແລກປ່ຽນ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 1052/ທຫລ, ລົງວັນທີ 27 ກັນຍາ 2024.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການກຳນົດອັດຕາແລກປ່ຽນ ຂອງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ໃຫ້ສອດຄ່ອງກັບກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ແນໃສ່ສ້າງເງື່ອນໄຂໃຫ້ລະບົບທະນາຄານສາມາດເຄື່ອນໄຫວບໍລິການແລກປ່ຽນເງິນຕາໄດ້ຢ່າງຄ່ອງຕົວ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາ.

**ມາດຕາ 2 ການກຳນົດອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ**

ກົມນະໂຍບາຍເງິນຕາ ກຳນົດອັດຕາແລກປ່ຽນອ້າງອີງລະຫວ່າງເງິນກີບກັບເງິນໂດລາສະຫະລັດ ປະຈຳວັນ ແລະ ແຈ້ງອັດຕາແລກປ່ຽນອ້າງອີງດັ່ງກ່າວ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 08:10 ໂມງເຊົ້າຂອງທຸກໆວັນລັດຖະການ ເພື່ອໃຫ້ບັນດາທະນາຄານທຸລະກິດນຳໃຊ້ເປັນບ່ອນອີງໃນການກຳນົດອັດຕາແລກປ່ຽນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ກົມບໍລິການທະນາຄານ ກຳນົດອັດຕາແລກປ່ຽນສຳລັບຊື້ ແລະ ຂາຍເງິນກີບກັບເງິນໂດລາສະຫະລັດ ແລະ ເງິນຕາຕ່າງປະເທດສະກຸນອື່ນໆ ໂດຍອີງໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາກຳນົດອອກ. ພ້ອມທັງ ແຈ້ງອັດຕາແລກປ່ຽນຊື້-ຂາຍດັ່ງກ່າວຂອງຕົນ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 08:30 ໂມງເຊົ້າຂອງທຸກໆວັນລັດຖະການ.

ສຳລັບການກຳນົດອັດຕາແລກປ່ຽນໃນວັນພັກລັດຖະການ ແມ່ນໃຫ້ຖືເອົາອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ກຳນົດອອກມື້ຫຼ້າສຸດ ກ່ອນວັນພັກລັດຖະການເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ມາດຕາ 3 ການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ເປັນເຈົ້າການກຳນົດອັດຕາແລກປ່ຽນ ລະຫວ່າງ ເງິນກີບກັບເງິນຕາຕ່າງປະເທດສະກຸນຕ່າງໆດ້ວຍຕົນເອງໃນແຕ່ລະວັນ ຕາມຫຼັກການ ດັ່ງນີ້:

1. ກຳນົດອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍເງິນກີບກັບເງິນໂດລາສະຫະລັດ ໄດ້ໃນຂອບບໍ່ເກີນ ±6.50% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2%;
2. ກຳນົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2% ສຳລັບການແລກປ່ຽນເງິນກີບກັບເງິນບາດ, ເງິນຢວນ, ເງິນເອີໂຣ, ເງິນເຢນ ແລະ ເງິນປອນສະເຕີຣິງ;
3. ກຳນົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 5% ສຳລັບການແລກປ່ຽນເງິນກີບກັບສະກຸນອື່ນໆ.

**ມາດຕາ 4 ການແຈ້ງອັດຕາແລກປ່ຽນໃຫ້ແກ່ມວນຊົນ ແລະ ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ**

ທະນາຄານທຸລະກິດ ຕ້ອງແຈ້ງອັດຕາແລກປ່ຽນສຳລັບໃຫ້ບໍລິການແກ່ລູກຄ້າ ເປັນແຕ່ລະໄລຍະລະຫວ່າງວັນ ທີ່ໃຫ້ບໍລິການຢູ່ສະຖານທີ່ບໍລິການ, ຜ່ານເວັບໄຊທ໌ ແລະ ຜ່ານຊ່ອງທາງໂຄສະນາອື່ນໆ ຂອງຕົນຢ່າງຊັດເຈນ ແລະ ຖືກຕ້ອງຕາມການຈັດຕັ້ງປະຕິບັດຕົວຈິງ.

ທະນາຄານທຸລະກິດ ມີໜ້າທີ່ລາຍງານສະພາບການເຄື່ອນໄຫວແລກປ່ຽນເງິນຕາ ຂອງຕົນ ເປັນປະຈຳວັນໃຫ້ແກ່ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 16:00 ໂມງຂອງທຸກໆວັນລັດຖະການ ຢ່າງຄົບຖ້ວນ ແລະ ຖືກຕ້ອງກັບການຈັດຕັ້ງປະຕິບັດຕົວຈິງ. ສຳລັບຂໍ້ມູນລາຍງານປະກອບມີ ອັດຕາແລກປ່ຽນ, ມູນຄ່າການຊື້-ຂາຍເງິນຕາສຳລັບແຕ່ລະຄູ່ສະກຸນເງິນ, ມູນຄ່າການຊື້-ຂາຍລວມຂອງແຕ່ລະສະກຸນເງິນ ແລະ ຂໍ້ມູນອື່ນໆ ຕາມແບບຟອມການລາຍງານທຸລະກຳແລກປ່ຽນເງິນຕາ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ ມີໜ້າທີ່ຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດ ພ້ອມທັງປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ກົມບໍລິການທະນາຄານ ແລະ ທະນາຄານທຸລະກິດ ມີໜ້າທີ່ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 1052/ທຫລ, ລົງວັນທີ 27 ກັນຍາ 2024 ແລະ ລະບຽບກ່ຽວຂ້ອງອື່ນທີ່ມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ຜູ້ວ່າການ

ວັດທະນາ ດາລາລອຍ